ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 11: Funny Stories

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 5:** ນິທານຊອນຫົວ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະ ຈຸດພິເສດ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊອນຫົວ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍ ແລະ ຈຸດພິເສດ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊອນຫົວ</td><td>ຄຳຖາມຫຼັກ (Questions):<br>1) ນິທານຊອນຫົວມີຄວາມໝາຍ ແລະ ຈຸດພິເສດແນວໃດ?<br>2) ນິທານຊອນຫົວມີການກຳເນີດ ແລະຂະຫຍາຍຕົວແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະ ການຂະຫຍາຍຕົວ ຂອງນິທານຊອນຫົວ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະ ການຂະຫຍາຍຕົວ ຂອງນິທານຊອນຫົວ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງເກດກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
</table>

- **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າ ເນື້ອໃນບົດເລື່ອງ “ກຳພ້າຜີນ້ອຍ” ແລະ ເລື່ອງ “ພູທ້າວພູນາງ”.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 5**

**ນິທານຊວນຫົວ**

**1. ຄວາມໝາຍ ແລະ ຈຸດພິເສດຂອງນິທານຊວນຫົວ** ( 35 ນາທີ )

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານຊວນຫົວມີຄວາມໝາຍ ແລະ ຈຸດພິເສດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (30 ນາທີ)

ນິທານຊວນຫົວ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງທີ່ໃຊ້ຄຳເວົ້າເຮັດໃຫ້ເກີດສຽງຫົວເຂົ້າໃນການປະດິດແຕ່ງ ເພື່ອຄວາມມ່ວນຊື່ນ ເຍາະເຍີ້ຍສຽດສີ ແລະ ກ່າວປະນາມໂຈມຕີທຸການກະທຳທີ່ບໍ່ດີ, ບໍ່ຖືກຕ້ອງ ບໍ່ສອດຄ່ອງກັບການດຳລົງຊີວິດຂອງທຸກຊັ້ນຄົນຢູ່ໃນສັງຄົມ.

ນິທານຊວນຫົວ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ທີ່ມີລັກສະນະພາໃຫ້ເກີດມີສຽງຫົວ, ຈຸດພິເສດຕົ້ນຕໍຂອງເລື່ອງພື້ນເມືອງປະເພດນີ້ແມ່ນ ໃຊ້ສຽງຫົວເປັນພາຫະນະ ເຊິ່ງເປັນຈຸດປະສົງຂອງບົດເລື່ອງ. ດັ່ງນັ້ນ, ຜູ້ຄົນທັງຫຼາຍຈິ່ງມັກເອີ້ນນິທານປະເພດນີ້ວ່າ: “ນິທານຊວນຫົວ” ຫຼື “ນິທານປະຈຳວັນ” (ບຸນລ້ອມ ສີບຸນເຮືອງ ແລະ ຄະນະ, 2014).

ເລື່ອງເລົ່າປະເພດນີ້ເປັນວັນນະຄະດີທີ່ກຳເນີດແຕ່ສະໄໝບູຮານ ແລະ ຂະຫຍາຍຕໍ່ຜ່ານໄລຍະສັງຄົມຕັ້ງແຕ່ກ່ອນຈົນເຖິງປະຈຸບັນ, ເຊິ່ງແມ່ນປະຊາຊົນຜູອອກແຮງງານເປັນຜູ້ປະດິດແຕ່ງ ຄັດຈ້ອນເລືອກເຟັ້ນເອົາທຸກແນວຄິດ ແລະ ການກະທຳທີ່ບໍ່ດີ, ບໍ່ສອດຄ້ອງກັບຄຸນສິນທັດ ຫຼື ຮີດຄອງປະເພນີເຊັ່ນ: ແນວຄິດຂີ້ຄ້ານມັກງ່າຍ, ຂີ້ຖີ່, ຂີ້ລັກ, ຂີ້ຕົວະ, ອວດອົ່ງທະນົງຕົວ, ໂງ່ຈ້າ...ຂອງຄົນໃນສັງຄົມ “ ສຽງຫົວແມ່ນກິລິຍາອັນໜຶ່ງຂອງຄົນ ” ຄົນເຮົາຫົວແມ່ນມີຫຼາຍສາເຫດຕ່າງກັນ. ເວົ້າລວມແລ້ວສຽງຫົວຂອງຄົນ ມີສອງປະເພດຄື: ສຽງຫົວສະລິລະສາດ ເຊິ່ງແມ່ນສຽງຫົວທີ່ເກີດຂຶ້ນຕາມທຳມະຊາດ ແລະ ພາໃຫ້ຄົນເຮົາຮູ້ສຶກສະບາຍກາຍ ສະບາຍໃຈໄປພ້ອມ. ໃນກໍລະນີນີ້ສຽງຫົວເຄີຍມີຄວາມໝາຍໄປທາງດີ, ທາງບວກສະເໜີ. ນອກຈາກນີ້ຍັງມີສຽງຫົວລັກສະນະຈິດຕະສາດ ເຊິ່ງແມ່ນສຽງຫົວທີ່ເກີດຈາກສະຕິປັນຍາ ຍາມໃດກໍ່ຕິດພັນກັບຈຸດປະສົງໃດໜຶ່ງຢ່າງຄັກແນ່; ມັນເກີດຂຶ້ນເມື່ອມີສະພາບ ແລະ ການກະທາ

ໃດໜຶ່ງທີ່ມີລັກສະນະບັງເອີນ, ຜິດປົກກະຕິ, ບໍ່ຖືກຕ້ອງກັບກົດເກນ ແລະ ຄວາມຊິນເຄີຍເຊິ່ງເປັນການບາດຫູ, ບາດຕາເຊິ່ງເປັນຕາຢາກຫົວ ຫຼື ເວົ້າແບບໜຶ່ງອີກກໍຄືສຽງຫົວນີ້ແມ່ນໝາກຜົນອັນໜຶ່ງມາຈາກຄວາມບໍ່ສອດຄ່ອງ, ເໝາະສົມລະຫວ່າງຮູບນອກ ແລະ ເນື້ອແທ້ຂອງເຫດການໃດໜຶ່ງ, ສຽງຫົວໃນກໍລະນີນີ້ ມີຄວາມໝາຍປະຕິເສດ ມີລັກສະນະສັງຄົມຢ່າງຈະແຈ້ງ.

ສຽງຫົວໃນນິທານຊວນຫົວ ມີຫຼາຍລະດັບ, ມີຫຼາຍຈຸດປະສົງຕ່າງກັນ ກ່ອນອື່ນໝົດປະຊາຊົນໄດ້ໃຊ້ສຽງຫົວເພື່ອຕຳນິຕິຕຽນແນວຄິດ ແລະ ການກະທຳຜິດພາດ, ສິ່ງທີ່ຕ່ຳຊ້າຫຼ້າຫຼັງໃນຮີດຄອງປະເພນີຕະຫຼອດເຖິງແບບແຜນການດຳລົງຊີວິດຂອງປະຊາຊົນຜູ້ອອກແຮງງານ; ລະດັບສູງກວ່ານັ້ນກໍຄືປະຊາຊົນໄດ້ໃຊ້ສຽງຫົວເພື່ອສຽດສີການໂຈມຕີ, ການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງ ແລະ ບໍລິວານຊັ້ນຈາຂອງເຂົາ, ກ່າວປະນາມລະບອບທີ່ມີຊົນຊັ້ນ ແລະ ຂາດຄວາມຍຸດຕິທຳ...

★ ນິທານຊວນຫົວ ສ່ວນຫຼວງຫຼາຍ ມັກເປັນບົດເລື່ອງທີ່ສັ້ນ ການປະກອບສ້າງບົດເລື່ອງມີລັກສະນະກະທັດຮັດ ໜັກແໜ້ນ ຕົວລະຄອນມີໜ້ອຍ, ເຄີຍມີການປະທະຄັດແຍ້ງກັນທາງແນວຄິດ, ນິດໄສ, ການປະພຶດ ແລະ ການປາກເວົ້າອີກດ້ວຍ. ຈາກການຂັດແຍ່ງທີ່ມີລັກສະນະກົງກັນຂ້າມນັ້ນ, ນິທານຊວນຫົວເຄີຍແກ້ໄຂບັນຫາແບບບັງເອີນໂດຍໄຊຊະນະຂອງຕົວລະຄອນຝ່າຍເປັນທຳເຊິ່ງພາໃຫ້ເກີດມີສຽງຫົວ ແບບເຍາະເຍີ້ຍສຽດສີ ຕົວລະຄອນຝ່າຍອະທຳ ອັນເປັນການດູດດຶງໃຈຜູ້ອ່ານ ຫຼື ຜູ້ຟັງຢູ່ສະເໝີ, ຈຸດພິເສດທີ່ໄດ້ກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ນິທານມີຄຸນຄ່າສູງໃນການສຶກສາ ແລະ ການຕໍ່ສູ້ໃນສັງຄົມ.

ນິທານຊວນຫົວຂອງລາວເຮົາ ອຸດົມສົມບູນສົມຄວນ ໃນນັ້ນມີທັງບົດເລື່ອງທີ່ມີລັກສະນະຄົບຖ້ວນ, ສຸດກົກສຸດປາຍ ມີທັງບົດເລື່ອງທີ່ຂາດບັ້ນຂາດຕອນກະແຈກກະຈາຍ ເຊິ່ງເກີດຂຶ້ນໃນຊີວິດປະຈຳວັນອັນມີຫຼາຍຮູບຫຼາຍສີຂອງປະຊາຊົນ. ສຽງຫົວໃນບົດເລື່ອງທີ່ເວົ້າເຖິງການດຳລົງຊີວິດປະຈຳວັນນັ້ນ ມີຄວາມໝາຍຕິຕຽນແບບເບົາບາງຕ່າງຝ່າຍຕ່າງເພິ່ງພໍໃຈ ແລະ ເບີກບານມວນຊື່ນເຊັ່ນ: ເລື່ອງ: ທ້າວ ໂປ້ ແລະ ເລື່ອງອື່ນໆ (ພູວົງ ໝໍ່ດາລາ ແລະ ຄະນະ, 2018).

**2. ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊວນຫົວ** (25 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານຊວນຫົວມີການກຳເນີດ ແລະຂະຫຍາຍ ຕົວແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ນິທານຊວນຫົວມີກົກເຄົ້າກຳເນີດມາຈາກການດຳລົງຊີວິດປະຈຳວັນຂອງປະຊາຊົນ ແລະ ຂະຫຍາຍຕົວແຮງຢູ່ໃນລະບອບສັງຄົມສັກດີນາ ເຊິ່ງເປັນລະບົບສັງຄົມທີ່ເປື່ອຍເຍື່ອຍ ແລະ ເຕັມໄປດ້ວຍຄວາມຂັດແຍ່ງທີ່ເປັນປໍລະປັກ ປະຊາຊົນໃຊ້ສຽງຫົວຂອງຕົນ ເພື່ອກ່າວປະນາມຢ່າງແຂງແຮງປະກອບສ່ວນສຸກດັນໃຫ້ລະບອບສັງຄົມທີ່ເກົ່າແກ່ຫຼ້າຫຼັງໄປເຖິງບ່ອນຊຸດໂຊມ ແລະ ພັງທະລາຍ. ບັນດາບົດເລື່ອງຕ່າງໆນັ້ນໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງໃນໝູ່ມະຫາຊົນ, ອາດເວົ້າໄດ້ວ່າຜູ້ເຖົ້າຜູ້ແກ່, ຜູ້ໜຸ່ມຜູ້ນ້ອຍກໍມັກເລົ່າ ມັກຟັງບັນດາເລື່ອງຊວນຫົວເຊັ່ນ: ເລື່ອງ ຊຽງ

ໜ້ຽງ, ເລື່ອງ ທ້າວ ໂປ້ ແລະ ອື່ນໆ. ເຊິ່ງໄດ້ເລົ່າ ແລະ ສືບຕໍ່ກັນມາໂດຍບໍ່ຮູ້ສິ້ນສຸດຈັກເທື່ອ, ປະຊາຊົນເຄີຍນິຍົມຊົມຊອບ ແລະ ຖະນຸຖະໜອມບົດເລື່ອງນີ້ຢູ່ສະເໝີ ເພາະມັນໄດ້ກາຍເປັນອາວຸດແຫຼມຄົມອັນໜຶ່ງທີ່ເຂົາເຈົ້າໃຊ້ໃນການຕໍ່ສູ້ລະບອບສັກດີນາ. ອິດທິພົນຂອງເລື່ອງ: "ຊຽງໜຽງ" ໄດ້ມີການແຜ່ຂະຫຍາຍກວ້າງໃນໝູ່ມະຊາຊົນ (ກຽງແກ້ວ ນອນນະວົງ ແລະຄະນະ, 2001).

ນິທານຊອນຫົວ ສ່ວນຫຼາຍເປັນເລື່ອງສັ້ນ, ການປະກອບສ້າງຂອງບົດເລື່ອງມີລັກສະນະກະທັດຮັດໜັກແໜ້ນ, ຕົວລະຄອນມີໜ້ອຍ ແລະມີການຂັດແຍ່ງກັນ ທາງດ້ານແນວຄິດນິໄສ, ການປະພຶດ ແລະການເວົ້າອີກດ້ວຍ. ຈາກການຂັດແຍ່ງທີ່ມີລັກສະນະກົງກັນຂ້າມ, ນິທານຂອນຫົວເຄີຍມີການແກ້ໄຂບັນຫາແບບບັງເອີນ ດ້ວຍໄຊຊະນະຂອງຕົວລະຄອນຝ່າຍເປັນທຳ ເຊິ່ງພາໃຫ້ເກີດມີສຽງຫົວເຍາະເຍີ້ຍສຽດສີຕົວລະຄອນຝ່າຍອະທຳອັນເປັນການດຶງດູດຈິດໃຈຂອງຜູ້ອ່ານຜູ້ຟັງຢູ່ສະເໝີ.

ນິທານຊອນຫົວ ມີຄຸນຄ່າສູງໃນການສຶກສາ ແລະ ການຕໍ່ສູ້ໃນສັງຄົມ, ນິທານຊອນຫົວຂອງລາວເຮົາມີລັກສະນະອຸດົມສົມບູນພໍສົມຄວນ. ໃນນັ້ນມີທັງເລື່ອງທີ່ມີລັກສະນະຄົບຖ້ວນ ແລະ ສຸດກົກສຸດປາຍ, ມີທັງເລື່ອງທີ່ຂາດບັ້ນຂາດຕອນ ແລະກະແຈກກະຈາຍ ເຊິ່ງເກີດຂຶ້ນໃນຊີວິດປະຈຳວັນ, ອັນມີຫຼາຍຮູບ ຫຼາຍສີຂອງປະຊາຊົນ. ສຽງຫົວຂອງບົດເລື່ອງທີ່ເວົ້າເຖິງຊີວິດປະຈຳວັນນັ້ນ, ມີຄວາມໝາຍແບບຕິຕຽນສຽດສີຢ່າງເລິກເຊິ່ງທີ່ສຸດເຊັ່ນ: ເລື່ອງທ້າວ ໂປ້, ເລື່ອງ ທ້າວ ສົມບໍ່ຄິດ, ພິເສດແມ່ນເລື່ອງຊຽງໝ້ຽງ, ຊຶ່ງຊຽງໝ້ຽງມີບັກຫຼາຍໆຕອນທີ່ເວົ້າເຖິງການກະທຳຕ່າງໆຂອງຕົວລະຄອນຄືຊຽງໝ້ຽງກັບຄູ່ກໍລະນີ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

ປະຊາຊົນມີຄວາມນິຍົມຊົມຊອບ ແລະຖະນຸຖະໜອມບົດເລື່ອງນີ້ຢູ່ສະເໝີມາ ເພາະມັນໄດ້ກາຍເປັນອາວຸດອັນແຫຼມຄົມອັນໜຶ່ງທີ່ເຂົາເຈົ້າໃຊ້ໃນການຕໍ່ສູ້ຕ້ານລະບອບສັກດີນາ. ອິທິພົນຂອງຊຽງໝ້ຽງແຜ່ຂະຫຍາຍກວ້າງຂວາງໃນໝູ່ປະຊາຊົນຈົນເຖິງຂັ້ນພວກສັກດີນາປົກຄອງບໍ່ອາດຈະເມີນເສີຍຕໍ່ໄປໄດ້ອີກ. ເຂົາເຈົ້າໄດ້ຮິບໂຮມເອົາເລື່ອງຊຽງໝ້ຽງມາດັດແປງໃຫ້ສອດຄ່ອງກັບສິດຜົນປະໂຫຍດຂອງເຂົາແລ້ວນຳມາຂຽນໄວ້ເປັນໜັງສືຜູກ. ໃນໜັງສືຊຽງໝ້ຽງນີ້ສຽງຫົວໂຈມຕີແບບປໍລະປັກໄດ້ລຸດຜ່ອນລົງມາເປັນສຽງຫົວຕໍ່ສູ້ແບບສຽດສີເຊິ່ງໃນທີ່ສຸດເລີຍຫັນປ່ຽນມາເປັນສຽງຫົວໂຄ່ນລົ້ມຊຽງໝ້ຽງເອງ. ໃນຕອນທ້າຍສະບັບຂຽນນັ້ນທ້າວຊຽງໝ້ຽງໄດ້ຖືກນຳໄປປ່ອຍໄວ້ໃນດອນເປົ່າປ່ຽວແຫ່ງໜຶ່ງ, ຈົນຈຳຕ້ອງໄດ້ຍອມຮັບວ່າ ຕົນເອງຜິດພາດໃນການຕໍ່ສູ້ຜ່ານມາ ແລະ ຂໍຍອມ "ກັບເນື້ອກັບຕົວ" ມາເປັນຄົນດີຕາມແບບສັງຄົມສັກດີນາ, ອັນພາໃຫ້ເກີດມີສຽງຫົວແບບ "ຫຍໍ້ຫຍັນ" ແບບໂລ່ງອົກໂລ່ງໃຈ ແລະ ແບບ "ອິດູກູນາສາໂທ" ຂອງຊົຊຂັ້ນປົກຄອງ.

ນອກຈາກເລື່ອງຊຽງໝ້ຽງແລ້ວ, ປະຊາຊົນບັນດາເຜົ່າ, ທ້ອງຖິ່ງຕ່າງໆກໍຍັງມີເລື່ອງອື່ນໆອີກທີ່ຄ້າຍຄືກັນເຊັ່ນ: "ຕາຍຈາງບຣາງ" ຂອງຊົນເຜົ່າກຶມມຸ, ຢູ່ຊຽງຂວາງນິຍົມກັນເລົ່າເລື່ອງ "ຊຽງໂພດ", ຢູ່ແຂວງຈຳປາສັກພັດມີເລື່ອງ "ລຸງດາວ" ແລະອື່ນໆ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

### III. ຂັ້ນສະຫຼູບ

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ຄວາມໝາຍ ແລະ ຈຸດພິເສດ
  - ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານຊອນຫົວ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2001). ວັນນະຄະດີລາວ. ລະຫັດ 630LI 222. ວິທະຍາໄລ ວິທະຍາສາດພື້ນຖານ. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ